ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 032/ປປທ

ນະຄອນຫຼວງວຽງຈັນ, ວັນທີ 17.01.2013

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍພັນທະປ້ອງກັນຊາດ ສະບັບປັບປຸງ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 037/ສພຊ, ລົງວັນທີ 13 ທັນວາ 2012;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ, ລົງວັນທີ 04 ມັງກອນ 2013;

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍພັນທະປ້ອງກັນຊາດ ສະບັບປັບປຸງ.

ມາດຕາ 2. ລັດຖະດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດແຫ່ງ ສປປ ລາວ.**

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 037 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ພັນທະປ້ອງກັນຊາດ ສະບັບປັບປຸງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ພັນທະປ້ອງກັນຊາດ ສະບັບປັບປຸງ ໃນວາລະກອງປະຊຸມຕອນບ່າຍຂອງວັນທີ 13 ທັນວາ 2012

**ກອງປະຊຸມໄດ້ຕົກລົງ:**

<u>ມາດຕາ 1.</u> ຮັບຮອງເອົາກົດໝາຍວ່າດ້ວຍ ພັນທະປ້ອງກັນຊາດ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2.</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 13 ທັນວາ 2012

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ ເລກທີ 25 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 13 ທັນວາ 2012

# ກົດໝາຍ
# ວ່າດ້ວຍ ພັນທະປ້ອງກັນຊາດ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການຄຸ້ມຄອງ, ການກວດກາ, ການປະຕິບັດນະໂຍບາຍ ກ່ຽວກັບວຽກງານພັນທະປ້ອງກັນຊາດ ແນໃສ່ປຸກລະດົມພົນລະເມືອງລາວທຸກຄົນ ໃຫ້ມີສະຕິຕື່ນຕົວ ເຂົ້າຮ່ວມໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອປົກປັກຮັກສາ ເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ ໄວ້ໃຫ້ໝັ້ນຄົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ຂອງຊາດ.

**ມາດຕາ 2 (ປັບປຸງ) ພັນທະປ້ອງກັນຊາດ**

ພັນທະປ້ອງກັນຊາດ ແມ່ນ ໜ້າທີ່ຕົ້ນຕໍ ແລະ ມີກຽດອັນສູງສົ່ງ ຂອງພົນລະເມືອງລາວທຸກຄົນ, ທຸກອົງການຈັດຕັ້ງ ໃນການປົກປັກຮັກສາ ເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ; ປົກປັກຮັກສາ ຊີວິດ ແລະ ຊັບສິນຂອງປະຊາຊົນ, ຮັບປະກັນສະເຖຍລະພາບ, ຄວາມໝັ້ນຄົງ ຂອງລະບອບປະຊາທິປະໄຕປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແຫ່ງ ສປປ ລາວ.

### ມາດຕາ 3 (ໃໝ່) ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ທະຫານພັນທະ** ໝາຍເຖິງ ຊາວໜຸ່ມທີ່ຖືກຄັດເລືອກເຂົ້າເປັນທະຫານຮັບໃຊ້ຊາດ ແລະ ປະຈຳການໃນກອງທັບ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍສະບັບນີ້;

2. **ທະຫານອາຊີບ** ໝາຍເຖິງ ຜູ້ສະໝັກໃຈເຂົ້າເປັນທະຫານໃນກອງທັບປະຊາຊົນລາວ ໂດຍໄດ້ຮັບການຄັດເລືອກ ຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍສະບັບນີ້;

3. **ກຳລັງສຳຮອງ** ໝາຍເຖິງ ກຳລັງບໍ່ປະຈຳການໃນກອງທັບປະຊາຊົນລາວ ໃນຍາມປົກກະຕິ ຊຶ່ງຢູ່ໃນແຜນການຈັດຕັ້ງປະກອບຂອງກອງທັບປະຊາຊົນລາວໃນຍາມສຸກເສີນ ແລະ ປະຕິບັດໜ້າທີ່ເປັນກອງໜູນໃຫ້ແກ່ກຳລັງປະຈຳການໃນກອງທັບເມື່ອມີຄວາມຕ້ອງການ;

4. **ກຳລັງປະຈຳການ** ໝາຍເຖິງ ທະຫານອາຊີບ ແລະ ທະຫານພັນທະ ທີ່ກຳລັງປະຕິບັດໜ້າທີ່ກຽມພ້ອມສູ້ຮົບ ແລະ ເຮັດວຽກງານປົກກະຕິໃນກອງທັບປະຊາຊົນລາວ;

5. **ກອງຫຼອນ** ໝາຍເຖິງ ກຳລັງປ້ອງກັນຊາດຂັ້ນບ້ານ ຊຶ່ງປະຕິບັດໜ້າທີ່ປົກປັກຮັກສາ ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງບ້ານ ຫຼື ປະສານສົມທົບກັບກຳລັງອື່ນ ເພື່ອປ້ອງກັນຂອບເຂດໃດໜຶ່ງ ຕາມການມອບໝາຍ;

6. **ກຳລັງປ້ອງກັນຕົວ** ໝາຍເຖິງ ພະນັກງານ, ກຳມະກອນ, ນັກສຶກສາ ປະກອບອາວຸດ ຊຶ່ງ ຈັດຕັ້ງຂຶ້ນຢູ່ຕາມສຳນັກງານ, ອົງການ, ສະຖາບັນການສຶກສາ, ໂຮງໝໍ, ໂຮງຈັກ, ໂຮງງານ ແລະ ສາງຄັງທີ່ເປັນຂອງລັດ, ມີໜ້າທີ່ປົກປັກຮັກສາ ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍພາຍໃນຂອບເຂດທີ່ຕັ້ງຂອງຕົນ.

### ມາດຕາ 4 (ໃໝ່) ນະໂຍບາຍກ່ຽວກັບວຽກງານພັນທະປ້ອງກັນຊາດ

ລັດ ສົ່ງເສີມວຽກງານພັນທະປ້ອງກັນຊາດ ດ້ວຍການສຶກສາອົບຮົມ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ອຸປະກອນ ໃຫ້ອົງການຈັດຕັ້ງປະຕິບັດວຽກງານພັນທະປ້ອງກັນຊາດ ເພື່ອສ້າງເງື່ອນໄຂໃຫ້ອົງການຈັດຕັ້ງດັ່ງກ່າວ ໄດ້ເຄື່ອນໄຫວຢ່າງມີປະສິດທິຜົນ.

ລັດ ຊຸກຍູ້ ໃຫ້ທຸກພາກສ່ວນໃນທົ່ວສັງຄົມ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນທາງດ້ານກຳລັງພົນ, ວັດຖຸ ແລະ ຈິດໃຈ ເຂົ້າໃນວຽກງານພັນທະປ້ອງກັນຊາດ.

### ມາດຕາ 5 (ໃໝ່) ຫຼັກການພື້ນຖານກ່ຽວກັບວຽກງານພັນທະປ້ອງກັນຊາດ

ວຽກງານພັນທະປ້ອງກັນຊາດ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ແຜນຍຸດທະສາດການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;

2. ລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ, ແຂວງ, ນະຄອນ, ເມືອງ, ເທດສະບານ ແລະ ບ້ານ;

3. ສະເໝີພາບ, ພາວະວິໄສ, ໂປ່ງໃສ ແລະ ຍຸຕິທຳ;

4. ຮັບປະກັນຄວາມລັບຂອງລັດ ແລະ ທາງລັດຖະການ ໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

5. ຮັບປະກັນຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງ ສປປ ລາວ.

### ມາດຕາ 6 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບພົນລະເມືອງລາວທຸກຄົນ ແລະ ທຸກອົງການຈັດຕັ້ງ ພາຍໃນປະເທດ.

### ມາດຕາ 7 (ໃໝ່) ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພັນທະປ້ອງກັນຊາດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ ແລະ ການພັດທະນາພື້ນຖານໂຄງລ່າງ, ການປະສານງານ ແລະ ການພັດທະນາຊັບພະຍາກອນມະນຸດ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ບົນພື້ນຖານຫຼັກການຢູ່ຮ່ວມກັນໂດຍສັນຕິ, ເຄົາລົບເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະ ກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

## ພາກທີ II

## ພັນທະປ້ອງກັນຊາດ

### ໝວດທີ 1

### ທະຫານພັນທະ

### ມາດຕາ 8 (ໃໝ່) ການລະດົມທະຫານພັນທະປະຈຳປີ

ການລະດົມທະຫານພັນທະປະຈຳປີ ແມ່ນ ການຈັດຕັ້ງປະຕິບັດແຜນການລະດົມພົນຂອງກະຊວງປ້ອງກັນປະເທດ ເພື່ອປ່ຽນແທນທະຫານທີ່ຈົບພັນທະໃນແຕ່ລະປີ, ຮັບປະກັນໃຫ້ມີກຳລັງປະຈຳການທີ່ພຽງພໍ ໃນການປົກປັກຮັກສາ ເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ ໄວ້ໃຫ້ໝັ້ນຄົງ.

**ມາດຕາ 9 (ປັບປຸງ) ເງື່ອນໄຂການເປັນທະຫານພັນທະ**

ພົນລະເມືອງລາວທຸກຄົນ ທີ່ເປັນຊາຍໜຸ່ມ, ຖືສັນຊາດລາວໂດຍກຳເນີດ, ມີອາຍຸແຕ່ ສິບແປດ ປີ ເຖິງ ຊາວຫ້າ ປີ, ມີສຸຂະພາບສົມບູນ ແລະ ແຂງແຮງ ຕ້ອງເຂົ້າຮັບໃຊ້ເປັນທະຫານພັນທະປ້ອງກັນຊາດ.

ສຳລັບຍິງໜຸ່ມ ທີ່ມີອາຍຸແຕ່ ສິບແປດ ປີ ເຖິງ ຊາວສາມ ປີ ກໍອາດຖືກຮຽກເຂົ້າຮັບໃຊ້ເປັນທະຫານພັນທະປ້ອງກັນຊາດ ໃນກໍລະນີຈຳເປັນ ແລະ ຕ້ອງການ.

**ມາດຕາ 10 (ປັບປຸງ) ການຂຶ້ນທະບຽນເປັນທະຫານພັນທະປະຈຳປີ**

ນາຍບ້ານ ຕ້ອງສົ່ງບັນຊີລາຍຊື່ຊາຍໜຸ່ມທີ່ມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ໃຫ້ກອງບັນຊາການທະຫານເມືອງ, ເທດສະບານ ກ່ອນເດືອນ ກໍລະກົດ ຂອງທຸກປີ.

ຄະນະກຳມະການລະດົມທະຫານພັນທະຂັ້ນເມືອງ ອອກຄຳສັ່ງຮຽກເອີ້ນ ຊາຍໜຸ່ມທີ່ເຖິງກະສຽນພັນທະ ລວມທັງຊາຍໜຸ່ມທີ່ໂຈະການເປັນທະຫານພັນທະໃນປີຜ່ານມາ ເພື່ອຂຶ້ນທະບຽນ ແລະ ກວດສຸຂະພາບ ໃນເດືອນ ສິງຫາ ຂອງທຸກປີ.

ການຂຶ້ນທະບຽນ ແລະ ການກວດສຸຂະພາບເປັນທະຫານພັນທະ ແມ່ນ ຄວາມຮັບຜິດຊອບຂອງ ກອງບັນຊາການທະຫານ ແລະ ຫ້ອງການສາທາລະນະສຸກເມືອງ, ເທດສະບານ.

**ມາດຕາ 11 (ປັບປຸງ) ການກຳນົດຈຳນວນພົນ**

ກະຊວງປ້ອງກັນປະເທດ ເປັນຜູ້ກຳນົດຈຳນວນພົນເຂົ້າເປັນທະຫານພັນທະປະຈຳປີ ໃຫ້ແຂວງ, ນະຄອນ. ຈາກນັ້ນ ແຂວງ, ນະຄອນ ແບ່ງຕົວເລກເຂົ້າເປັນທະຫານພັນທະໃຫ້ເມືອງ, ເທດສະບານ.

**ມາດຕາ 12 (ປັບປຸງ) ການຄັດເລືອກເອົາທະຫານພັນທະ**

ພາຍຫຼັງໄດ້ຂຶ້ນທະບຽນ ແລະ ກວດສຸຂະພາບແລ້ວ ຄະນະກຳມະການລະດົມທະຫານພັນທະຂັ້ນເມືອງ ຕ້ອງຄັດເລືອກເອົາຜູ້ທີ່ມີສຸຂະພາບສົມບູນ, ແຂງແຮງ ເຂົ້າເປັນທະຫານພັນທະ ຕາມຈຳນວນທີ່ໄດ້ກຳນົດໃຫ້ໃນແຕ່ລະປີ ຊຶ່ງດຳເນີນຕາມ ສາມ ຮູບການ ດັ່ງນີ້:

1. ຄວາມສະໝັກໃຈ;
2. ການບັ່ງຕົວ;
3. ການຈົກສະຫຼາກ.

ຮູບການຄັດເລືອກເຂົ້າເປັນທະຫານພັນທະ ດ້ວຍຄວາມສະໝັກໃຈ, ການບັ່ງຕົວ ແລະ ການຈົກສະຫຼາກ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 13 (ປັບປຸງ) ການໂຈະການເປັນທະຫານພັນທະ**

ການໂຈະການເປັນທະຫານພັນທະ ຕ້ອງຢູ່ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ກຳລັງຮັບການປິ່ນປົວສຸຂະພາບ ຢູ່ໂຮງໝໍ ຫຼື ສະຖານທີ່ໃດໜຶ່ງ;
2. ນັກຮຽນ, ນັກສຶກສາ ກຳລັງຮ່ຳຮຽນ, ສຶກສາ ຄົ້ນຄວ້າໃນປີສຸດທ້າຍ ຂອງມະຫາວິທະຍາໄລ ຫຼື ສະຖາບັນການສຶກສາແຫ່ງອື່ນ ຢູ່ພາຍໃນ ຫຼື ຕ່າງປະເທດ;
3. ຜູ້ມີອ້າຍ ຫຼື ນ້ອງທີ່ຍັງບໍ່ທັນສຳເລັດໜ້າທີ່ທະຫານພັນທະ ເວັ້ນເສຍແຕ່ມີຄວາມສະໝັກໃຈ;
4. ຜູ້ກຳລັງຖືກດຳເນີນຄະດີ ຫຼື ປະຕິບັດໂທດ.

ຜູ້ຖືກໂຈະການເປັນທະຫານພັນທະ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ເມື່ອກໍລະນີດັ່ງກ່າວ ຫາກໝົດໄປ ຕ້ອງໄດ້ຄັດເລືອກເຂົ້າເປັນທະຫານພັນທະ.

**ມາດຕາ 14 (ປັບປຸງ) ການຍົກເວັ້ນການເປັນທະຫານພັນທະ**

ຜູ້ຈະຖືກຍົກເວັ້ນການເປັນທະຫານພັນທະ ຕ້ອງຢູ່ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ເປັນຄົນໃບ້, ບ້າ, ເສຍຈິດ;
2. ເປັນຄົນເສຍອົງຄະ, ພິການ;
3. ເປັນພະຍາດຕິດແປດທີ່ບໍ່ສາມາດປິ່ນປົວໄດ້;
4. ເປັນລູກຜູ້ດຽວໃນຄອບຄົວ ເວັ້ນເສຍແຕ່ມີຄວາມສະໝັກໃຈ;
5. ເປັນນັກບວດ.

**ມາດຕາ 15 (ປັບປຸງ) ກຳນົດເວລາການເປັນທະຫານພັນທະ**

ກຳນົດເວລາການເປັນທະຫານພັນທະ ແມ່ນ ຊາວສີ່ ເດືອນ ນັບແຕ່ວັນ ຄະນະກຳມະການລະດົມທະຫານພັນທະຂັ້ນເມືອງ ຮັບເອົາເປັນຕົ້ນໄປ.

ຖ້າຫາກມີຄວາມຈຳເປັນ ສັດຖະມົນຕີວ່າການກະຊວງປ້ອງກັນປະເທດ ມີສິດຕໍ່ເວລາການເປັນທະຫານພັນທະໄດ້ ແຕ່ສູງສຸດບໍ່ໃຫ້ເກີນ ຫົກ ເດືອນ.

**ມາດຕາ 16 (ໃໝ່) ສິດ ຂອງທະຫານພັນທະ**

ທະຫານພັນທະ ມີ ສິດ ດັ່ງນີ້:

1. ໄດ້ຮັບຂໍ້ມູນຂ່າວສານທົ່ວໄປ ຢ່າງຖືກຕ້ອງ;
2. ໄດ້ຮັບການຝຶກແອບ ຮ່ຳຮຽນການເມືອງ ແລະ ການທະຫານ;
3. ປະກອບຄຳຄິດຄຳເຫັນ, ຕຳນິສິ່ງຂ່າວຊ່ວຍເຫຼືອຊຶ່ງກັນ ແລະ ກັນ;
4. ຂໍລາພັກໃນກໍລະນີ ຄອບຄົວເຈັບເປັນ ຫຼື ເສຍຊີວິດ;
5. ໄດ້ຮັບນະໂຍບາຍດ້ານຕ່າງໆ ຕາມລະບຽບການ;
6. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 17 (ໃໝ່) ໜ້າທີ່ ຂອງທະຫານພັນທະ**

ທະຫານພັນທະ ມີ ໜ້າທີ່ ດັ່ງນີ້:

1. ເຄົາລົບລັດຖະທຳມະນູນ ແລະ ກົດໝາຍ ແຫ່ງ ສປປ ລາວ, ກົດລະບຽບ ແລະ ວິໄນຂອງກອງທັບ, ປະຕິບັດທຸກມະຕິ, ຄຳສັ່ງ ຂອງຜູ້ບັນຊາ ຢ່າງເຂັ້ມງວດ;

2. ເຂົ້າໃຈຢ່າງເລິກເຊິ່ງ ແລະ ປະຕິບັດພັນທະຂອງຕົນ ທີ່ມີຕໍ່ປະເທດຊາດ, ຮັກສາກຽດສັກສີ ຂອງກອງທັບ, ເຄົາລົບນັບຖືຮີດຄອງປະເພນີອັນດີງາມ ຂອງປະຊາຊົນລາວບັນດາເຜົ່າ;

3. ຕັ້ງໜ້າຄົ້ນຄວ້າຮ່ຳຮຽນການເມືອງ, ຝຶກແອບການທະຫານ, ການນຳໃຊ້ອາວຸດຍຸດໂທປະກອນ ແລະ ພາຫະນະເຕັກນິກການທະຫານ, ຮຽນພາສາຕ່າງປະເທດ, ຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດທີ່ປອດໃສ, ຮັກສາສຸຂະອະນາໄມ, ເສີມສ້າງກຳລັງກາຍ ກຳລັງວັງຊາ ສາມາດເຄື່ອນໄຫວປະຕິບັດໜ້າທີ່ສູ້ຮົບໄດ້ໃນທຸກສະຖານະການ;

4. ດຸໝັ່ນຂະຫຍັນພຽນໃນການອອກແຮງງານ ເພີ່ມພູນຜະລິດຜົນ ເພື່ອປະກອບສ່ວນເຂົ້າໃນການແກ້ໄຂຊີວິດການເປັນຢູ່ຂອງກົມກອງໃຫ້ດີຂຶ້ນ ບົນຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ;

5. ເຂົ້າຮ່ວມໃນວຽກງານກໍ່ສ້າງຮາກຖານການເມືອງ ຕິດພັນກັບການພັດທະນາຊົນນະບົດຮອບດ້ານ ປະກອບສ່ວນຊ່ວຍແກ້ໄຂຄວາມທຸກຍາກຂອງປະຊາຊົນ;

6. ປົກປັກຮັກສາ ອາວຸດ, ລູກກະສຸນ, ພາຫະນະເຕັກນິກ ແລະ ອຸປະກອນການທະຫານ, ເຄື່ອງນຸ່ງຫົ່ມທີ່ໄດ້ປະກອບໃຫ້ ຮັບປະກັນຄວາມປອດໄພ ບໍ່ໃຫ້ຕົກເຮ່ຍເສັຍຫາຍ ສາມາດນຳໃຊ້ໄດ້ຍາວນານ ແລະ ບໍ່ໃຫ້ຕົກຢູ່ໃນກຳມື ຂອງສັດຕູຢ່າງເດັດຂາດ;

7. ຮັກສາຄວາມລັບຂອງຊາດ ແລະ ຄວາມລັບການທະຫານ;

8. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 18 (ປັບປຸງ) ການສຳເລັດໜ້າທີ່ການເປັນທະຫານພັນທະ**

ທະຫານພັນທະທີ່ໄດ້ຮັບໃຊ້ຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນ ມາດຕາ 15 ຂອງກົດໝາຍສະບັບນີ້ ແມ່ນໄດ້ສຳເລັດໜ້າທີ່ການເປັນທະຫານພັນທະ.

**ມາດຕາ 19 (ໃໝ່) ການອອກຈາກການເປັນທະຫານພັນທະກ່ອນກຳນົດ**

ທະຫານພັນທະ ຈະໄດ້ອອກຈາກການເປັນທະຫານພັນທະກ່ອນກຳນົດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ມີສຸຂະພາບອ່ອນເພຍ ຊຶ່ງບໍ່ສາມາດປະຕິບັດໜ້າທີ່ຄົບອາຍຸການເປັນທະຫານພັນທະ;

2. ຜູ້ມີຄວາມຈຳເປັນພິເສດ ໂດຍໄດ້ຮັບການຢັ້ງຢືນເປັນລາຍລັກອັກສອນ ຈາກກອງບັນຊາການທະຫານເມືອງ, ເທດສະບານ, ອົງການປົກຄອງບ້ານ ແລະ ອົງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 20 (ປັບປຸງ) ການສະໝັກເປັນທະຫານອາຊີບ**

ທະຫານພັນທະ ທີ່ມີຈຸດປະສົງສະໝັກເປັນທະຫານອາຊີບ ເພື່ອຮັບໃຊ້ໃນກອງທັບປະຊາຊົນລາວ ມີສິດສະເໜີຕໍ່ຜູ້ບັນຊາການບ່ອນຕົນສັງກັດ ຢ່າງຊ້າ ສາມ ເດືອນ ກ່ອນໝົດກຳນົດເວລາການເປັນທະຫານພັນທະ.

**ມາດຕາ 21 (ປັບປຸງ) ພັນທະ ຂອງຜູ້ສຳເລັດໜ້າທີ່ການເປັນທະຫານພັນທະ**

ຜູ້ສຳເລັດໜ້າທີ່ການເປັນທະຫານພັນທະ ຕ້ອງປະຕິບັດ ດັ່ງນີ້:

1. ຮັກສາຄວາມລັບ ຂອງກອງທັບ ຢ່າງເດັດຂາດ;
2. ສະເໜີຕົວ ແລະ ຂຶ້ນບັນຊີເປັນກຳລັງສຳຮອງ ປະເພດໜຶ່ງ ຢູ່ກອງບັນຊາການທະຫານເມືອງ, ເທດສະບານ ບ່ອນຕົນຂຶ້ນກັບ ພາຍໃນກຳນົດເວລາ ໜຶ່ງ ເດືອນ ນັບແຕ່ວັນໄດ້ຮັບໃບອະນຸຍາດອອກຈາກການເປັນທະຫານພັນທະເປັນຕົ້ນໄປ;
3. ເປັນແບບຢ່າງໃນການປະຕິບັດລະບຽບກົດໝາຍ, ປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພັດທະນາເສດຖະກິດ-ສັງຄົມ ຢູ່ທ້ອງຖິ່ນຂອງຕົນ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ 2
## ຄະນະກຳມະການລະດົມທະຫານພັນທະ

**ມາດຕາ 22 (ໃໝ່) ຄະນະກຳມະການລະດົມທະຫານພັນທະ**

ຄະນະກຳມະການລະດົມທະຫານພັນທະ ປະກອບດ້ວຍ:

1. ຄະນະກຳມະການລະດົມທະຫານພັນທະ ແຂວງ, ນະຄອນ ໂດຍແມ່ນເຈົ້າແຂວງ, ເຈົ້າຄອງນະຄອນ ເປັນປະທານ, ຫົວໜ້າກອງບັນຊາການທະຫານແຂວງ, ນະຄອນ ເປັນຮອງປະທານ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ ແລະ ຜູ້ຕາງໜ້າພະແນກການທີ່ກ່ຽວຂ້ອງ ເປັນຄະນະ;
2. ຄະນະກຳມະການລະດົມທະຫານພັນທະ ເມືອງ, ເທດສະບານ ໂດຍແມ່ນເຈົ້າເມືອງ, ຫົວໜ້າເທດສະບານ ເປັນປະທານ, ຫົວໜ້າກອງບັນຊາການທະຫານເມືອງ, ເທດສະບານ ເປັນຮອງປະທານ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ ແລະ ຜູ້ຕາງໜ້າຫ້ອງການທີ່ກ່ຽວຂ້ອງ ເປັນຄະນະ;
3. ຄະນະກຳມະການລະດົມທະຫານພັນທະບ້ານ ໂດຍແມ່ນນາຍບ້ານ ເປັນປະທານ, ຜູ້ຮັບຜິດຊອບ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບບ້ານ, ຜູ້ຕາງໜ້າແນວລາວສ້າງຊາດ ແລະ ຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນຂັ້ນບ້ານ ເປັນຄະນະ.

ມາດຕາ 23 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການລະດົມທະຫານພັນທະ ແຂວງ, ນະຄອນ

ຄະນະກຳມະການລະດົມທະຫານພັນທະ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ ແລະ ຈັດຕັ້ງປະຕິບັດແຜນການລະດົມທະຫານພັນທະຂັ້ນຂອງຕົນ ບົນພື້ນຖານແຜນການລະດົມພົນປະຈຳປີ ຂອງກະຊວງປ້ອງກັນປະເທດ;

2. ຊີ້ນຳ ການຈັດຕັ້ງປະຕິບັດແຜນການ ແລະ ວຽກງານລະດົມທະຫານພັນທະ ຂອງຄະນະກຳມະການລະດົມທະຫານພັນທະ ເມືອງ, ເທດສະບານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ອອກຂໍ້ຕົກລົງ ລະດົມທະຫານພັນທະ ປະຈຳປີ ຕາມແຜນການ ຂອງກະຊວງປ້ອງກັນປະເທດ;

4. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານ ຂອງຄະນະກຳມະການລະດົມທະຫານພັນທະ ເມືອງ,ເທດສະບານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ຮັບ ແລະ ພິຈາລະນາ ຄຳສະເໜີ ຂອງປະຊາຊົນ ກ່ຽວກັບການລະດົມທະຫານພັນທະ ຕາມການສະເໜີ ຂອງຄະນະກຳມະການລະດົມທະຫານພັນທະ ຂັ້ນເມືອງ;

6. ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານລະດົມທະຫານພັນທະ;

7. ສະຫຼຸບ ແລະ ລາຍງານ ຜົນຂອງການຈັດຕັ້ງປະຕິບັດແຜນການລະດົມທະຫານພັນທະປະຈຳປີ ຕໍ່ກະຊວງປ້ອງກັນປະເທດ;

8. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 24 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການລະດົມທະຫານພັນທະ ເມືອງ, ເທດສະບານ

ຄະນະກຳມະການລະດົມທະຫານພັນທະ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ ແລະ ຈັດຕັ້ງປະຕິບັດແຜນການລະດົມທະຫານພັນທະຂັ້ນຂອງຕົນ ບົນພື້ນຖານແຜນການລະດົມທະຫານພັນທະປະຈຳປີ ຂອງແຂວງ, ນະຄອນ;

2. ອອກຄຳສັ່ງ ຮຽກເອົາຊາຍໜຸ່ມ ທີ່ເຖິງອາຍຸກະກຽມເປັນທະຫານພັນທະ ເຂົ້າສະເໜີຕົວ, ຂຶ້ນທະບຽນ ແລະ ກວດສຸຂະພາບ;

3. ຮັບຮອງເອົາຜົນກວດສຸຂະພາບ ແລະ ຕົກລົງເອົາລາຍຊື່ຜູ້ມີເງື່ອນໄຂຄົບຖ້ວນເຂົ້າເປັນທະຫານພັນທະ ປະຈຳປີ;

4. ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຂອງຄະນະກຳມະການລະດົມທະຫານພັນທະບ້ານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ຮັບ ແລະ ພິຈາລະນາ ຄຳສະເໜີ ຂອງປະຊາຊົນ ກ່ຽວກັບການລະດົມທະຫານພັນທະ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ;

6. ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານລະດົມທະຫານພັນທະ;

7. ສະຫຼຸບ ແລະ ລາຍງານ ຜົນຂອງການຈັດຕັ້ງປະຕິບັດແຜນການລະດົມທະຫານພັນທະປະຈໍາປີ ຂອງຕົນ ຕໍ່ຄະນະກໍາມະການລະດົມທະຫານພັນທະ ແຂວງ, ນະຄອນ;

8. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 25 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກໍາມະການລະດົມທະຫານພັນທະບ້ານ**

ຄະນະກໍາມະການລະດົມທະຫານພັນທະບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ ແລະ ລະດົມຊາວໜຸ່ມ ໃຫ້ຕື່ນຕົວ ແລະ ສະໝັກໃຈ ເຂົ້າສະເໜີຕົວ, ຂຶ້ນທະບຽນ ແລະ ກວດສຸຂະພາບ;

2. ຂຶ້ນ ແລະ ສົ່ງບັນຊີລາຍຊື່ຊາວໜຸ່ມ ທີ່ເຖິງອາຍຸກະກຽມເປັນທະຫານພັນທະ ໃຫ້ຄະນະກໍາມະການລະດົມທະຫານພັນທະ ເມືອງ, ເທດສະບານ;

3. ຈັດພິທີສົ່ງມອບຊາວໜຸ່ມ ຜູ້ຖືກຄັດເລືອກເປັນທະຫານພັນທະໃຫ້ເມືອງ, ເທດສະບານ;

4. ຮັບ ແລະ ພິຈາລະນາຄໍາສະເໜີ ຂອງປະຊາຊົນ ກ່ຽວກັບການລະດົມທະຫານພັນທະ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ສະຫຼຸບລະພາບການຈັດຕັ້ງປະຕິບັດວຽກງານລະດົມພັນທະປະຈໍາປີຂອງບ້ານ ຕໍ່ຄະນະກໍາມະການລະດົມທະຫານພັນທະ ເມືອງ, ເທດສະບານ;

6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ທະຫານອາຊີບ

**ມາດຕາ 26 (ໃໝ່) ການເຂົ້າເປັນທະຫານອາຊີບ**

ພົນລະເມືອງລາວທຸກຄົນ ທີ່ມີຄວາມຕື່ນຕົວ, ສະໝັກໃຈ ແລະ ມີມາດຕະຖານຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 28 ຂອງກົດໝາຍສະບັບນີ້ ຈະຖືກຄັດເລືອກເຂົ້າເປັນທະຫານອາຊີບ ເພື່ອຮັບໃຊ້ໃນກອງທັບປະຊາຊົນລາວ.

**ມາດຕາ 27 (ໃໝ່) ທີ່ມາ ຂອງທະຫານອາຊີບ**

ທະຫານອາຊີບຂອງກອງທັບປະຊາຊົນລາວ ມາຈາກ:

1. ພົນລະເມືອງລາວບັນດາເຜົ່າທີ່ມີຄວາມສະໝັກໃຈ ແລະ ໄດ້ຜ່ານການສອບເສັງຄັດເລືອກເຂົ້າເປັນທະຫານອາຊີບ;

2. ນັກຮຽນ, ນັກສຶກສາທີ່ໄດ້ຮຽນຈົບວິຊາຊີບໃດໜຶ່ງ ຢູ່ພາຍໃນ ແລະ ຕ່າງປະເທດ;

3. ທະຫານພັນທະ ທີ່ມີຄວາມສະໝັກໃຈເຂົ້າ ເປັນທະຫານອາຊີບ;

4. ພະນັກງານ-ລັດຖະກອນ ທີ່ມາຈາກອົງການຈັດຕັ້ງຂອງລັດ.

**ມາດຕາ 28 (ໃໝ່) ມາດຕະຖານ ຂອງທະຫານອາຊີບ**

ຜູ້ສະໝັກເຂົ້າເປັນທະຫານອາຊີບ ຕ້ອງມີມາດຕະຖານ ດັ່ງນີ້:

1. ເປັນຄົນລາວ ໂດຍກຳເນີດ ແລະ ຖືສັນຊາດລາວ ທີ່ມີອາຍຸແຕ່ ສິບແປດ ປີ ເຖິງ ສາມສິບປີ, ໃນກໍລະນີ ທີ່ມີຄວາມຕ້ອງການ ຜູ້ມີອາຍຸເກີນກວ່າ ສາມສິບປີ ອາດໄດ້ຮັບການພິຈາລະນາ ໃຫ້ເປັນທະຫານອາຊີບ;

2. ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ພັກ-ລັດ ແລະ ປະຊາຊົນ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນລາວ, ຈຳແນກໄດ້ມິດ-ສັດຕູ, ມີຄຸນສົມບັດສິນທຳປະຕິວັດ, ມີນ້ຳໃຈກ້າຫານເສຍສະລະ, ມີສະຕິຕໍ່ການຈັດຕັ້ງ, ເຄົາລົບ ແລະ ປະຕິບັດລະບຽບກົດໝາຍ ຢ່າງເຂັ້ມງວດ;

3. ຈົບມັດທະຍົມຕອນປາຍ, ມີວິຊາສະເພາະ ຫຼື ວິຊາຊີບໃດໜຶ່ງທີ່ກອງທັບຕ້ອງການ, ມີຊີວະປະຫວັດຈະແຈ້ງ, ສຳລັບພົນລະເມືອງລາວ ທີ່ຢູ່ຊົນນະບົດ ຫ່າງໄກສອກຫຼີກ ຊຶ່ງບໍ່ຈົບມັດທະຍົມຕອນປາຍ ອາດໄດ້ຮັບການພິຈາລະນາ;

4. ມີສຸຂະພາບແຂງແຮງ, ຮ່າງກາຍສົມບູນ, ສຳລັບເພດຊາຍ ມີລວງສູງ 1,60 ແມັດ, ເພດຍິງ ມີລວງສູງ 1,55 ແມັດ ຂຶ້ນໄປ.

ສຳລັບເພດຊາຍທີ່ໄດ້ຜ່ານການເປັນທະຫານພັນທະມາກ່ອນ ທີ່ມີເງື່ອນໄຂ ແລະ ມາດຕະຖານຄົບຖ້ວນ ຈະໄດ້ຮັບການພິຈາລະນາເປັນພິເສດ.

**ມາດຕາ 29 (ໃໝ່) ການຕົກລົງຮັບເອົາທະຫານອາຊີບ**

ກະຊວງປ້ອງກັນປະເທດ ເປັນຜູ້ຕົກລົງຮັບເອົາຜູ້ມີມາດຕະຖານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍສະບັບນີ້ ເຂົ້າເປັນທະຫານອາຊີບ.

## ໝວດທີ 4
## ກຳລັງສຳຮອງ

**ມາດຕາ 30 (ປັບປຸງ) ກຳລັງສຳຮອງ**

ກຳລັງສຳຮອງ ຖືກສ້າງຕັ້ງຂຶ້ນ ຢູ່ຕາມທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ເພື່ອປະຕິບັດໜ້າທີ່ເປັນກຳລັງໜູນໃຫ້ແກ່ກຳລັງປະຈຳການຂອງກອງທັບ ໃນເວລາຈຳເປັນ ຊຶ່ງປະກອບດ້ວຍກຳລັງພົນ ແລະ ພາຫະນະເຕັກນິກ ສຳຮອງ.

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງ ແລະ ກວດກາການຈັດຕັ້ງປະຕິບັດວຽກງານກໍ່ສ້າງກຳລັງສຳຮອງ.

ອົງການປົກຄອງທ້ອງຖິ່ນ ເປັນຜູ້ກໍ່ສ້າງ ແລະ ປັບປຸງ ກຳລັງສຳຮອງ.

**ມາດຕາ 31 (ປັບປຸງ) ກຳລັງພົນສຳຮອງ**

ກຳລັງພົນສຳຮອງ ແບ່ງອອກເປັນ ສອງ ປະເພດ ດັ່ງນີ້:

1. ກຳລັງພົນສຳຮອງປະເພດໜຶ່ງ ປະກອບດ້ວຍ ຜູ້ໄດ້ຜ່ານການເປັນທະຫານພັນທະ ຫຼື ທະຫານອາຊີບມາກ່ອນ, ມີເງື່ອນໄຂ ແລະ ມາດຕະຖານຄົບຖ້ວນ ແລະ ສາມາດຮັບໃຊ້ໃນຖັນແຖວກອງທັບເມື່ອມີຄວາມຕ້ອງການ;
2. ກຳລັງພົນສຳຮອງປະເພດສອງ ປະກອບດ້ວຍ ພົນລະເມືອງລາວ ທີ່ມີອາຍຸແຕ່ສິບແປດ ປີ ເຖິງ ສີ່ສິບຫ້າປີ ທີ່ບໍ່ໄດ້ຜ່ານການເປັນທະຫານມາກ່ອນ, ມີເງື່ອນໄຂ ແລະ ມາດຕະຖານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 32 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກຳລັງພົນສຳຮອງ**

ກຳລັງພົນສຳຮອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພັດທະນາທ້ອງຖິ່ນ;
2. ປະຕິບັດຄຳສັ່ງຮຽກເອີ້ນ, ເຕົ້າໂຮມ ຫັດແອບ ແລະ ກວດກາຄວາມກຽມພ້ອມເຂົ້າປະຈຳການໃນກອງທັບ;
3. ປະຕິບັດຕາມລະບຽບການຕ່າງໆ ກ່ຽວກັບກຳລັງສຳຮອງ ແລະ ລະບຽບກົດໝາຍ;
4. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 33 (ໃໝ່) ສິດ ແລະ ໜ້າທີ່ຂອງຜູ້ບັນຊາກຳລັງສຳຮອງ**

ຜູ້ບັນຊາກຳລັງສຳຮອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳແໜ້ນຈຳນວນພົນ ແລະ ຄຸນນະພາບ ຂອງກອງກຳລັງສຳຮອງ;
2. ດຳເນີນຊີວິດການເມືອງ ແລະ ປະຕິບັດລະບອບສ່ອງແສງລາຍງານ ຢ່າງເປັນປົກກະຕິ;
3. ຄຸ້ມຄອງບັນຊາກົມກອງ ເວລາເຕົ້າໂຮມ ຝຶກແອບ ຮ່ຳຮຽນ ແລະ ກວດກາການກຽມພ້ອມປະຕິບັດໜ້າທີ່ເມື່ອມີຄຳສັ່ງຂອງຂັ້ນເທິງ;
4. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ການແຕ່ງຕັ້ງຜູ້ບັນຊາກຳລັງສຳຮອງ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 34 (ໃໝ່) ການສິ້ນສຸດການເປັນກຳລັງພົນສຳຮອງ**

ການເປັນກຳລັງພົນສຳຮອງ ຈະສິ້ນສຸດລົງເມື່ອບຸກຄົນນັ້ນ ຫາກມີອາຍຸເກີນ ສີ່ສິບຫ້າ ປີ ສຳລັບເພດຊາຍ, ສີ່ສິບ ປີ ສຳລັບເພດຍິງ, ມີສຸຂະພາບອ່ອນເພຍ ຫຼື ໄດ້ເສຍຊີວິດ.

**ມາດຕາ 35 (ໃໝ່) ພາຫະນະເຕັກນິກສຳຮອງ**

ພາຫະນະເຕັກນິກສຳຮອງ ປະກອບດ້ວຍ ພາຫະນະຂົນສົ່ງ, ລະບົບໄຫລະຄົມມະນາຄົມ ແລະ ການສື່ສານ, ລະບົບສາທາລະນະສຸກ, ພື້ນຖານວັດຖຸເຕັກນິກ ຂອງລັດ ແລະ ເອກະຊົນ ທີ່ກອງທັບຕ້ອງການໃນສະພາວະສຸກເສີນ.

**ມາດຕາ 36 (ໃໝ່) ການຝຶກອົບຮົມ ແລະ ທັດແອບກຳລັງສຳຮອງ**

ກອງບັນຊາການທະຫານແຂວງ, ນະຄອນ ເປັນຜູ້ສ້າງແຜນການຝຶກອົບຮົມ ແລະ ທັດແອບກຳລັງສຳຮອງ. ກອງບັນຊາການທະຫານເມືອງ, ເທດສະບານ ເປັນຜູ້ຈັດຕັ້ງປະຕິບັດແຜນການຝຶກອົບຮົມ ແລະ ທັດແອບກຳລັງສຳຮອງ ປະຈຳປີ.

ການຝຶກອົບຮົມກຳລັງສຳຮອງ ເຫຼົ່າຮົບວິຊາສະເພາະ ທີ່ບໍ່ມີຢູ່ຂັ້ນທ້ອງຖິ່ນ ຂອງຕົນ ແມ່ນໃຫ້ດຳເນີນ ຢູ່ກົມກອງເຫຼົ່າຮົບກຳລັງຫຼວງ ທີ່ຢູ່ໃກ້ຄຽງ.

## ພາກທີ 5
## ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ

**ມາດຕາ 37 (ປັບປຸງ) ກຳລັງກອງຫຼອນ**

ກຳລັງກອງຫຼອນ ແມ່ນ ກຳລັງເຄິ່ງປະກອບອາວຸດ ຂອງປະຊາຊົນບັນດາເຜົ່າ ຊຶ່ງປະຕິບັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຮັກສາຄວາມເປັນລະບຽບຮຽບຮ້ອຍ ຕິດພັນກັບການ ພັດທະນາເສດຖະກິດ-ສັງຄົມ ພາຍໃນຂອບເຂດບ້ານ ແລະ ກຸ່ມບ້ານຂອງຕົນ ພ້ອມທັງປະສານສົມທົບກັບກຳລັງພາກສ່ວນອື່ນທີ່ກ່ຽວຂ້ອງຕາມການມອບໝາຍ.

ກຳລັງກອງຫຼອນ ຂຶ້ນກັບ ບ້ານ, ກຸ່ມບ້ານ ແລະ ກະຊວງປ້ອງກັນປະເທດ ຕາມສາຍຕັ້ງ.

**ມາດຕາ 38 (ໃໝ່) ມາດຕະຖານ ຂອງກຳລັງກອງຫຼອນ**

ກຳລັງກອງຫຼອນ ຕ້ອງມີມາດຕະຖານ ດັ່ງນີ້:

1. ເປັນຄົນລາວ ໂດຍກຳເນີດ ແລະ ຖືສັນຊາດລາວ;
2. ເປັນຊາຍ ທີ່ມີອາຍຸແຕ່ ສິບແປດ ປີ ຫາ ຫ້າສິບ ປີ ຫຼື ເປັນຍິງທີ່ມີອາຍຸແຕ່ ສິບແປດ ປີ ຫາ ສີ່ສິບ ປີ;
3. ມີຊີວະປະຫວັດຈະແຈ້ງ;

4. ມີນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະ ປະຊາຊົນ;

5. ມີສຸຂະພາບແຂງແຮງ ແລະ ສາມາດເຄື່ອນໄຫວປະຕິບັດໜ້າທີ່ ທີ່ໄດ້ຮັບການມອບໝາຍເປັນຢ່າງດີ.

**ມາດຕາ 39 (ໃໝ່) ສິດ ແລະ ໜ້າທີ່ ຂອງກຳລັງກອງຫຼອນ**

ກຳລັງກອງຫຼອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ພາຍໃນບ້ານ ແລະ ກຸ່ມບ້ານ;

2. ຝຶກຝົນຫຼໍ່ຫຼອມຕົນເອງ, ຮ່ຳຮຽນການເມືອງ-ການທະຫານ, ວິຊາສະເພາະ ແລະ ກຽມພ້ອມປະຕິບັດມະຕິຄຳສັ່ງຂອງຂັ້ນເທິງ;

3. ຍົກສູງສະຕິລະວັງຕົວ ຕ້ານທຸກກົນອຸບາຍທຳລາຍມ້າງເພ ຂອງຜູ້ບໍ່ຫວັງດີ, ສະກັດກັ້ນທຸກການລະເມີດລະບຽບກົດໝາຍ;

4. ເປັນແບບຢ່າງໃນການສ້າງເສດຖະກິດຄອບຄົວ, ແກ້ໄຂຊີວິດການເປັນຢູ່ ແລະ ປະກອບສ່ວນເຂົ້າໃນການສ້າງບ້ານ ໃຫ້ເປັນບ້ານພັດທະນາ;

5. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ສະຫຼຸບ ລາຍງານ ກ່ຽວກັບການເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນ ຕໍ່ການຈັດຕັ້ງ ແລະ ຂັ້ນເທິງຢ່າງເປັນປົກກະຕິ;

7. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 40 (ໃໝ່) ການອົບຮົມ ແລະ ຝຶກແອບກຳລັງກອງຫຼອນ**

ໃນແຕ່ລະປີ ກຳລັງກອງຫຼອນ ຕ້ອງໄດ້ຮັບການອົບຮົມການເມືອງ ແລະ ຝຶກແອບການທະຫານ ໃນກຳນົດເວລາ ແລະ ສະຖານທີ່ເໝາະສົມ.

ສຳລັບຜູ້ບັນຊາກຳລັງກອງຫຼອນຂັ້ນນາຍພອດຂຶ້ນໄປ ໄດ້ຮັບການຝຶກອົບຮົມຢູ່ໂຮງຮຽນການທະຫານທ້ອງຖິ່ນ ຂອງແຂວງ, ນະຄອນ.

**ມາດຕາ 41 (ໃໝ່) ຜູ້ບັນຊາກຳລັງກອງຫຼອນ**

ຜູ້ບັນຊາກຳລັງກອງຫຼອນ ຕ້ອງແມ່ນຜູ້ມີຄຸນສົມບັດ, ມີຄວາມສາມາດ, ເປັນແບບຢ່າງໃນການປະຕິບັດໜ້າທີ່. ສຳລັບບາງເຂດໃນກໍລະນີທີ່ມີຄວາມຈຳເປັນ ຜູ້ບັນຊາກຳລັງກອງຫຼອນ ອາດແມ່ນນາຍທະຫານແຕ່ ຊັ້ນ ຮ້ອຍຕີ ຂຶ້ນໄປ.

**ມາດຕາ 42 (ປັບປຸງ) ກໍາລັງປ້ອງກັນຕົວ**

ກໍາລັງປ້ອງກັນຕົວ ຈັດຕັ້ງຂຶ້ນຢູ່ຕາມສໍານັກງານ, ອົງການ, ສະຖາບັນການສຶກສາ, ໂຮງໝໍ, ໂຮງຈັກໂຮງງານ, ສາງຕັ້ງ ທີ່ເປັນຂອງລັດ ຢູ່ພາຍໃຕ້ການຊີ້ນໍາ ຂອງຄະນະອໍານວຍການ ທີ່ກ່ຽວຂ້ອງ ແລະ ຂຶ້ນກັບກະຊວງປ້ອງກັນປະເທດ ຕາມສາຍຕັ້ງ.

**ມາດຕາ 43 (ປັບປຸງ) ມາດຕະຖານ ຂອງກໍາລັງປ້ອງກັນຕົວ**

ກໍາລັງປ້ອງກັນຕົວ ມີມາດຕະຖານ ຄືກັນກັບ ມາດຕະຖານຂອງກໍາລັງກອງຫຼອນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 38 ຂອງກົດໝາຍສະບັບນີ້.

**ມາດຕາ 44 (ໃໝ່) ສິດ ແລະ ໜ້າທີ່ ຂອງກໍາລັງປ້ອງກັນຕົວ**

ກໍາລັງປ້ອງກັນຕົວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໃນສໍານັກງານ, ອົງການ, ສະຖາບັນການສຶກສາ, ໂຮງໝໍ, ໂຮງຈັກໂຮງງານ, ສາງຕັ້ງ ຂອງຕົນ;
2. ຝຶກຝົນຫຼໍ່ຫຼອມຕົນເອງ, ຮໍ່າຮຽນການເມືອງ, ການທະຫານ, ວັດທະນະທໍາ ແລະ ລະບຽບກົດໝາຍ;
3. ຍົກສູງສະຕິລະວັງຕົວຕ້ານທຸກກົນອຸບາຍທໍາລາຍມ້າງເພ ຂອງຜູ້ບໍ່ຫວັງດີ, ສະກັດກັ້ນທຸກການລະເມີດລະບຽບກົດໝາຍ;
4. ເປັນແບບຢ່າງໃນການຜະລິດ, ສ້າງເສດຖະກິດ, ແກ້ໄຂຊີວິດການເປັນຢູ່ ແລະ ປະກອບສ່ວນເຂົ້າໃນການກໍ່ສ້າງຮາກຖານໃຫ້ເຂັ້ມແຂງ;
5. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ;
6. ສະຫຼຸບ ລາຍງານ ກ່ຽວກັບການເຄື່ອນໄຫວປະຕິບັດໜ້າທີ່ ຂອງຕົນ ຕໍ່ການຈັດຕັ້ງ ແລະ ຂັ້ນເທິງຢ່າງເປັນປົກກະຕິ;
7. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 45 (ໃໝ່) ການອົບຮົມ ແລະ ຝຶກແອບກໍາລັງປ້ອງກັນຕົວ**

ໃນແຕ່ລະປີ ກໍາລັງປ້ອງກັນຕົວ ຕ້ອງໄດ້ຮັບການອົບຮົມການເມືອງ ແລະ ຝຶກແອບການທະຫານ ໃນກໍານົດເວລາ ແລະ ສະຖານທີ່ເໝາະສົມ.

**ມາດຕາ 46 (ໃໝ່) ຜູ້ບັນຊາກໍາລັງປ້ອງກັນຕົວ**

ຜູ້ບັນຊາກໍາລັງປ້ອງກັນຕົວ ຕ້ອງແມ່ນພະນັກງານ-ກໍາມະກອນ ທີ່ມີຄຸນສົມບັດດີ, ມີຄວາມຮູ້, ຄວາມສາມາດໃນການບັນຊາ.

# ໝວດທີ 6
## ການລະດົມພົນ ແລະ ພາຫະນະ ໃນຍາມສຸກເສີນ

**ມາດຕາ 47 (ໃໝ່) ການລະດົມພົນ ແລະ ພາຫະນະ ໃນຍາມສຸກເສີນ**

ການລະດົມພົນ ແລະ ພາຫະນະ ໃນຍາມສຸກເສີນ ໃຫ້ປະຕິບັດ ດັ່ງນີ້:

1. ປະທານປະເທດ ປະກາດສະພາວະສຸກເສີນ ເພື່ອລະດົມກຳລັງແຮງສັງລວມຂອງຊາດເມື່ອມີໄພຂົ່ມຂູ່ ຕໍ່ສະເຖຍລະພາບ ແລະ ຄວາມໝັ້ນຄົງຂອງຊາດ ຫຼື ເກີດໄພພິບັດທຳມະຊາດ;

2. ປະທານປະເທດ ປະກາດສະພາວະສຸກເສີນ ເປັນພາກສ່ວນ, ເປັນບໍລິເວນ ເພື່ອແກ້ໄຂສະພາບການທີ່ເກີດຂຶ້ນ ຢູ່ບາງເຂດ, ບາງບໍລິເວນ ຂອງປະເທດ;

3. ກຳລັງສຳຮອງ, ກຳລັງກອງຫຼອນ, ກຳລັງປ້ອງກັນຕົວ ລວມທັງ ພາຫະນະເຕັກນິກສຳຮອງ ຕ້ອງເຂົ້າປະຈຳການ ແລະ ກຽມພ້ອມປະຕິບັດໜ້າທີ່;

4. ກະຊວງປ້ອງກັນປະເທດ ເປັນຜູ້ຈັດຕັ້ງປະຕິບັດ ການລະດົມກຳລັງພົນ ແລະ ພາຫະນະເຕັກນິກ.

**ມາດຕາ 48 (ປັບປຸງ) ການສິ້ນສຸດການລະດົມພົນ ແລະ ພາຫະນະເຕັກນິກໃນຍາມສຸກເສີນ**

ເມື່ອສະພາບການຫາກໄດ້ກັບຄືນ ສູ່ສະພາວະປົກກະຕິ ແລະ ມີປະກາດຢ່າງເປັນທາງການ ຈາກປະທານປະເທດ ແລ້ວ ການລະດົມພົນ ແລະ ພາຫະນະເຕັກນິກ ກໍສິ້ນສຸດລົງ.

ກຳລັງພົນ ທີ່ຖືກລະດົມນັ້ນ ໃຫ້ກັບຄືນສູ່ກົມກອງ, ທ້ອງຖິ່ນເດີມ. ສ່ວນພາຫະນະເຕັກນິກ ແລະ ອຸປະກອນຕ່າງໆ ທີ່ຖືກລະດົມ ໃຫ້ສົ່ງຄືນແກ່ເຈົ້າຂອງເດີມ, ຖ້າຫາກມີການເປ່ເພ ຫຼື ເສັຍຫາຍ ກໍຕ້ອງສ້ອມແປງ ຫຼື ທົດແທນຄືນ ຕາມຄວາມເໝາະສົມ.

## ພາກທີ III
## ການຄຸ້ມຄອງ ແລະ ກວດກາວຽກງານ
## ພັນທະປ້ອງກັນຊາດ

### ໝວດທີ 1
### ການຄຸ້ມຄອງ

**ມາດຕາ 49 (ໃໝ່) ອົງການຄຸ້ມຄອງ**

ລັດຖະບານ ຄຸ້ມຄອງວຽກງານພັນທະປ້ອງກັນຊາດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງປ້ອງກັນປະເທດ ຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບ ກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ອົງການຄຸ້ມຄອງວຽກງານພັນທະປ້ອງກັນຊາດ ປະກອບດ້ວຍ:

1. ກະຊວງປ້ອງກັນປະເທດ;
2. ກອງບັນຊາການທະຫານ ແຂວງ, ນະຄອນ;
3. ກອງບັນຊາການທະຫານ ເມືອງ, ເທດສະບານ;
4. ອົງການປົກຄອງບ້ານ.

**ມາດຕາ 50 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນປະເທດ**

ໃນການຄຸ້ມຄອງວຽກງານພັນທະປ້ອງກັນຊາດ ກະຊວງປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ຮ່າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລັດຖະບັນຍັດ ແລະ ດຳລັດກ່ຽວກັບວຽກງານພັນທະປ້ອງກັນຊາດ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;
2. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ, ແຜນຍຸດທະສາດ ກ່ຽວກັບການກໍ່ສ້າງກຳລັງປະກອບອາວຸດປະຊາຊົນ ແລະ ວຽກງານພັນທະປ້ອງກັນຊາດ;
3. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ເພື່ອຄຸ້ມຄອງມະຫາພາກ ໃນວຽກງານພັນທະປ້ອງກັນຊາດ;
4. ໂຄສະນາ ເຜີຍແຜ່, ຊີ້ນຳການຈັດຕັ້ງປະຕິບັດ ລະບຽບກົດໝາຍ ກ່ຽວກັບວຽກງານພັນທະປ້ອງກັນຊາດ;
5. ຊີ້ນຳ ການຈັດຕັ້ງປະຕິບັດວຽກງານ ແລະ ແຜນການລະດົມທະຫານພັນທະປະຈຳປີ ຂອງກອງບັນຊາການທະຫານ ແຂວງ, ນະຄອນ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

6. ປັບປຸງ ກໍ່ສ້າງກົງຈັກຄຸ້ມຄອງຂັ້ນຕ່າງໆ ແລະ ບຸກຄະລາກອນໃນຂະແໜງການຂອງຕົນ;

7. ພິຈາລະນາແກ້ໄຂຄຳສະເໜີ, ຄຳຮ້ອງ ຂອງພົນລະເມືອງ ກ່ຽວກັບວຽກງານພັນທະປ້ອງກັນຊາດ;

8. ພົວພັນ ຮ່ວມມືກັບບັນດາປະເທດເພື່ອນມິດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພັນທະປ້ອງກັນຊາດ;

9. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານພັນທະປ້ອງກັນຊາດຕໍ່ລັດຖະບານ ຢ່າງເປັນປົກກະຕິ;

10.ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 51 (ໃໝ່) ສິດ ແລະ ໜ້າທີ່ ຂອງກອງບັນຊາການທະຫານແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານພັນທະປ້ອງກັນຊາດ ກອງບັນຊາການທະຫານແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດ, ມະຕິ, ຄຳສັ່ງ, ຄຳແນະນຳ ແລະ ແຜນການ ຂອງກະຊວງປ້ອງກັນປະເທດ ກ່ຽວກັບວຽກງານພັນທະປ້ອງກັນຊາດ;

2. ໂຄສະນາ ເຜີຍແຜ່ລະບຽບກົດໝາຍ ກ່ຽວກັບວຽກງານພັນທະປ້ອງກັນຊາດ ພາຍໃນແຂວງ, ນະຄອນຢ່າງກວ້າງຂວາງ ແລະ ທົ່ວເຖິງ;

3. ຊີ້ນຳການຈັດຕັ້ງປະຕິບັດວຽກງານພັນທະປ້ອງກັນຊາດ ຂອງກອງບັນຊາການທະຫານເມືອງ, ເທດສະບານ;

4. ຝຶກອົບຮົມຜູ້ບັນຊາກຳລັງກອງຫຼອນແຕ່ຂັ້ນນາຍໝວດຂຶ້ນໄປຢູ່ໂຮງຮຽນການທະຫານທ້ອງຖິ່ນ ຂອງແຂວງ, ນະຄອນ;

5. ປະສານສົມທົບກັບຂະແໜງການອື່ນ ກ່ຽວກັບວຽກງານພັນທະປ້ອງກັນຊາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ພົວພັນ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານພັນທະປ້ອງກັນຊາດ ຕາມການມອບໝາຍຂອງຂັ້ນເທິງ;

7. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານພັນທະປ້ອງກັນຊາດ, ວຽກງານກອງຫຼອນ, ກຳລັງປ້ອງກັນຕົວ ແລະ ການກໍ່ສ້າງກຳລັງສຳຮອງ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 52 (ໃໝ່) ສິດ ແລະ ໜ້າທີ່ ຂອງກອງບັນຊາການທະຫານ ເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານພັນທະປ້ອງກັນຊາດ ກອງບັນຊາການທະຫານ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດ, ມະຕິ, ຄຳສັ່ງ, ຄຳແນະນຳ ແລະ ແຜນການ ຂອງແຂວງ, ນະຄອນ ກ່ຽວກັບວຽກງານພັນທະປ້ອງກັນຊາດ;

2. ເຜີຍແຜ່ລະບຽບກົດໝາຍ ກ່ຽວກັບວຽກງານພັນທະປ້ອງກັນຊາດ ພາຍໃນເມືອງ, ເທດສະບານ ຢ່າງກວ້າງຂວາງ ແລະ ທົ່ວເຖິງ;

3. ຊີ້ນຳການຈັດຕັ້ງປະຕິບັດວຽກງານພັນທະປ້ອງກັນຊາດ ຂອງບ້ານ;

4. ແຈ້ງລາຍຊື່ຜູ້ຫຼົບຫຼີກ ແລະ ໂຕນໜີຈາກການເປັນທະຫານພັນທະ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດຕາມມາດຕະການຕໍ່ຜູ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

5. ຈັດຕັ້ງການອົບຮົມການເມືອງ ແລະ ຝຶກແອບການທະຫານ ໃຫ້ກຳລັງສຳຮອງ, ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ໃນກຳນົດເວລາ ແລະ ສະຖານທີ່ເໝາະສົມ;

6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານພັນທະປ້ອງກັນຊາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານພັນທະປ້ອງກັນຊາດ, ວຽກງານກອງຫຼອນ, ກຳລັງປ້ອງກັນຕົວ ແລະ ການກໍ່ສ້າງກຳລັງສຳຮອງ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 53 (ໃໝ່) ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານພັນທະປ້ອງກັນຊາດ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາອົບຮົມຊາວໜຸ່ມ ໃຫ້ມີຄວາມຕື່ນຕົວປະຕິບັດພັນທະປ້ອງກັນຊາດ;

2. ຂຶ້ນບັນຊີລາຍຊື່ຊາວໜຸ່ມ ທີ່ເຖິງກະສຽນເປັນທະຫານພັນທະ ສົ່ງໃຫ້ກອງບັນຊາການທະຫານ ເມືອງ, ເທດສະບານ;

3. ຈັດສົ່ງຊາວໜຸ່ມ ທີ່ຖືກຄັດເລືອກເປັນທະຫານພັນທະ ແລະ ຕ້ອນຮັບຜູ້ສຳເລັດໜ້າທີ່ເປັນທະຫານພັນທະ;

4. ປະຕິບັດນະໂຍບາຍຕໍ່ຄອບຄົວ ຂອງຊາວໜຸ່ມທີ່ກຳລັງປະຕິບັດໜ້າທີ່ເປັນທະຫານພັນທະ;

5. ປະສານສົມທົບກັບພາກສ່ວນອື່ນ ໃນການປະຕິບັດໜ້າທີ່ວຽກງານພັນທະປ້ອງກັນຊາດ ຕາມການມອບໝາຍ;

6. ຊີ້ນຳ, ນຳພາກຳລັງກອງຫຼອນ ທີ່ຂຶ້ນກັບບ້ານ ຂອງຕົນ;

7. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານພັນທະປ້ອງກັນຊາດ, ວຽກງານກອງຫຼອນ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 54 (ໃໝ່) ສິດ ແລະ ໜ້າທີ່ ຂອງພາກສ່ວນອື່ນ

ໃນການຄຸ້ມຄອງວຽກງານພັນທະປ້ອງກັນຊາດ ບັນດາກະຊວງ, ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງອື່ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໃຫ້ການຮ່ວມມື, ອຳນວຍຄວາມສະດວກ ແລະ ປະກອບສ່ວນເຂົ້າໃນວຽກງານພັນທະປ້ອງກັນຊາດ ຕາມຂອບເຂດ ແລະ ຄວາມຮັບຜິດຊອບຂອງຕົນ;

2. ປະກອບສ່ວນເຂົ້າໃນການສຶກສາອົບຮົມຊາວໜຸ່ມ ທີ່ເຖິງກະສຽນເຂົ້າເປັນທະຫານພັນທະ ຕາມລະບຽບກົດໝາຍ;

3. ຊ່ວຍເຫຼືອເບິ່ງແຍງຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ຈິດໃຈຕໍ່ຄອບຄົວທະຫານພັນທະ ທີ່ກຳລັງປະຕິບັດໜ້າທີ່ຢູ່ກົມແຖວກອງທັບ ໂດຍສະເພາະແມ່ນ ຜູ້ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກສອກຫຼີກ;

4. ຮັບເອົາຄືນ ຜູ້ສຳເລັດການເປັນທະຫານພັນທະ ແລະ ຮັບໃຊ້ກອງທັບ ເຂົ້າເຮັດວຽກ ຫຼື ສຶກສາຕໍ່;

5. ສ້າງເງື່ອນໄຂ ໃຫ້ຜູ້ສຳເລັດການເປັນທະຫານພັນທະ ໄດ້ເຂົ້າເຮັດວຽກ ຫຼື ສຶກສາ ໃນສະຖາບັນການສຶກສາຕ່າງໆ.

## ໝວດທີ 2
## ການກວດກາ

### ມາດຕາ 55 (ໃໝ່) ອົງການກວດກາ

ອົງການກວດກາວຽກງານພັນທະປ້ອງກັນຊາດ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

ອົງການກວດກາພາຍໃນ ແມ່ນ ພາກສ່ວນໜຶ່ງ ຂອງອົງການຄຸ້ມຄອງວຽກງານພັນທະປ້ອງກັນຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 ຂອງກົດໝາຍສະບັບນີ້.

ອົງການກວດກາພາຍນອກ ມີ ສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ.

ມາດຕາ 56 (ໃໝ່) ເນື້ອໃນການກວດກາ

ການກວດກາວຽກງານພັນທະປ້ອງກັນຊາດ ແມ່ນ ການກວດກາການປະຕິບັດ:

1. ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານພັນທະປ້ອງກັນຊາດ;
2. ລະບຽບກົດໝາຍ ກ່ຽວກັບພັນທະປ້ອງກັນຊາດ;
3. ນະໂຍບາຍ ແລະ ການນຳໃຊ້ມາດຕະການ ຕໍ່ຜູ້ລະເມີດລະບຽບກົດໝາຍ ກ່ຽວກັບພັນທະປ້ອງກັນຊາດ.

ມາດຕາ 57 (ໃໝ່) ຮູບການການກວດກາ

ການກວດກາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 56 ຂອງກົດໝາຍສະບັບນີ້ ແມ່ນດຳເນີນດ້ວຍຮູບການ ດັ່ງນີ້:

1. ການກວດກາປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາປົກກະຕິ ແມ່ນ ການກວດກາຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ແລະ ບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການກວດກາວຽກງານພັນທະປ້ອງກັນຊາດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຢ່າງເຂັ້ມງວດ.

## ພາກທີ IV
## ງົບປະມານ, ເຄື່ອງແບບ ແລະ ເຄື່ອງນຸ່ງຫົ່ມ

ມາດຕາ 58 (ໃໝ່) ງົບປະມານ, ເຄື່ອງແບບ ແລະ ເຄື່ອງນຸ່ງຫົ່ມ ຂອງທະຫານພັນທະ ແລະ ກຳລັງສຳຮອງ

ງົບປະມານຮັບໃຊ້ວຽກງານລະດົມທະຫານພັນທະ ແລະ ກໍ່ສ້າງກຳລັງສຳຮອງ ແມ່ນ ຂຶ້ນກັບກະຊວງປ້ອງກັນປະເທດ.

ກະຊວງປ້ອງກັນປະເທດ ເປັນຜູ້ສະໜອງ ເຄື່ອງແບບ ແລະ ເຄື່ອງນຸ່ງຫົ່ມ ໃຫ້ທະຫານພັນທະ ແລະ ກຳລັງສຳຮອງໃນເວລາຝຶກແອບ ຮ່ຳຮຽນ ແລະ ປະຕິບັດໜ້າທີ່.

**ມາດຕາ 59 (ໃໝ່) ງົບປະມານ, ເຄື່ອງແບບ ແລະ ເຄື່ອງນຸ່ງຫົ່ມ ສໍາລັບກໍາລັງກອງຫຼອນ ແລະ ກໍາລັງປ້ອງກັນຕົວ**

ງົບປະມານ, ເຄື່ອງແບບ ແລະ ເຄື່ອງນຸ່ງຫົ່ມ ສໍາລັບກໍາລັງກອງຫຼອນ ແລະ ກໍາລັງປ້ອງກັນຕົວ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

## ພາກທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ
### ໝວດທີ 1
### ນະໂຍບາຍຕໍ່ຜູ້ມີຜົນງານ

**ມາດຕາ 60 (ປັບປຸງ) ນະໂຍບາຍຕໍ່ທະຫານພັນທະໃນເວລາປະຕິບັດໜ້າທີ່**

ໃນເວລາປະຕິບັດໜ້າທີ່ ທະຫານພັນທະ ຈະໄດ້ຮັບນະໂຍບາຍ ດັ່ງນີ້:

1. ການຍົກລະດັບການສຶກສາ ແລະ ການຝຶກອົບຮົມ ວິຊາຊີບໃດໜຶ່ງ;
2. ເງິນເດືອນຕາມຊັ້ນ ແລະ ນະໂຍບາຍຕ່າງໆ ຄືກັນກັບ ທະຫານອາຊີບ;
3. ການຍ້ອງຍໍ ແລະ ເລື່ອນຊັ້ນ ຕາມຜົນງານຕົວຈິງ;
4. ການເອົາໃຈໃສ່ໃນການເບິ່ງແຍງຄອບຄົວ ຈາກອົງການປົກຄອງທ້ອງຖິ່ນ, ການຈັດຕັ້ງ ແລະ ປະຊາຊົນ;
5. ນະໂຍບາຍ ຄືກັນກັບທະຫານອາຊີບ ໃນເວລາຖືກບາດເຈັບ, ເສຍອົງຄະ, ເສຍຊີວິດ ຫຼື ຫາຍສາບສູນ.

**ມາດຕາ 61 (ປັບປຸງ) ນະໂຍບາຍຕໍ່ຜູ້ສໍາເລັດໜ້າທີ່ເປັນທະຫານພັນທະ**

ຜູ້ສໍາເລັດໜ້າທີ່ເປັນທະຫານພັນທະ ຈະໄດ້ຮັບນະໂຍບາຍ ດັ່ງນີ້:

1. ໃບຢັ້ງຢືນ ການສໍາເລັດໜ້າທີ່ເປັນທະຫານພັນທະ;
2. ບູລິມະສິດ ໃນການຮຽນຕໍ່ ຫຼື ເຂົ້າເຮັດວຽກ ຕາມຄວາມຮູ້ຄວາມສາມາດ ໂດຍບໍ່ໄດ້ສອບເສັງ ແລະ ຄັດເລືອກອີກ;
3. ເງິນອຸດໜູນ, ເຄື່ອງນຸ່ງຫົ່ມ, ຄ່າເດີນທາງກັບຄືນທ້ອງຖິ່ນ ຕາມລະບຽບການ;
4. ພິທີຈັດສົ່ງຈາກກົມກອງ ແລະ ພິທີຕ້ອນຮັບ ຢ່າງເປັນທາງການ ຈາກອົງການປົກຄອງບ້ານ.

**ມາດຕາ 62 (ປັບປຸງ) ນະໂຍບາຍຕໍ່ກໍາລັງກອງຫຼອນ ແລະ ກໍາລັງປ້ອງກັນຕົວ**

ກໍາລັງກອງຫຼອນ ແລະ ກໍາລັງປ້ອງກັນຕົວ ໄດ້ຮັບນະໂຍບາຍ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 63 (ໃໝ່) ນະໂຍບາຍຕໍ່ຄະນະກຳມະການລະດົມທະຫານພັນທະແຕ່ລະຂັ້ນ**

ຄະນະກຳມະການລະດົມທະຫານພັນທະແຕ່ລະຂັ້ນ ທີ່ມີຜົນງານໃນວຽກງານພັນທະປ້ອງກັນຊາດ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 64 (ປັບປຸງ) ນະໂຍບາຍຕໍ່ບຸກຄົນ ແລະ ການຈັດຕັ້ງທີ່ຖືກລະດົມ**

ບຸກຄົນ ທີ່ຖືກລະດົມໃນຍາມສຸກເສີນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍສະບັບນີ້ ຈະໄດ້ຮັບນະໂຍບາຍຄືກັບກັບທະຫານປະຈຳການ.

ການຈັດຕັ້ງ ຫຼື ນິຕິບຸກຄົນ ທີ່ໄດ້ປະກອບສ່ວນທາງດ້ານພາຫະນະ, ວັດຖຸປັດໄຈໃນຍາມສຸກເສີນ ຈະໄດ້ຮັບນະໂຍບາຍ ຍ້ອງຍໍ, ຊົມເຊີຍ ຕາມຜົນງານຕົວຈິງ.

## ໝວດທີ 2
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 65 (ປັບປຸງ) ການຂັດຂວາງ, ການຊຸກເຊື່ອງ ແລະ ປິດບັງການເປັນທະຫານພັນທະ**

ບຸກຄົນ ທີ່ໄດ້ຂັດຂວາງ, ຊຸກເຊື່ອງ ຫຼື ປິດບັງບໍ່ໃຫ້ບຸກຄົນອື່ນໄປເປັນທະຫານ ພັນທະ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ ຫຼື ຖືກດຳເນີນຄະດີຕາມແຕ່ລະກໍລະນີ.

**ມາດຕາ 66 (ປັບປຸງ) ການຫຼົບຫລີກຈາກການເປັນທະຫານພັນທະ**

ບຸກຄົນ ທີ່ບໍ່ໄປຂຶ້ນທະບຽນ, ບໍ່ປະຕິບັດຄຳສັ່ງຮຽກເອີ້ນເຂົ້າເປັນທະຫານພັນທະ ຈະຖືກສຶກສາອົບຮົມ, ກ່າວເຕືອນ ຫຼື ຈະບໍ່ໄດ້ຮັບການສົ່ງເສີມການສຶກສາຮ່ຳຮຽນ ແລະ ບໍ່ມີສິດເຂົ້າເປັນລັດຖະກອນ.

**ມາດຕາ 67 (ປັບປຸງ) ການໂຕນໜີຈາກກົມກອງ**

ທະຫານພັນທະ ທີ່ໂຕນໜີ ຈາກກົມກອງ ຈະຖືກສຶກສາອົບຮົມ, ກ່າວເຕືອນແລ້ວໃຫ້ກັບຄືນກົມກອງເດີມ ຫຼື ຈະຖືກດຳເນີນຄະດີ ຕາມລະບຽບກົດໝາຍ.

**ມາດຕາ 68 (ໃໝ່) ມາດຕະການຕໍ່ກຳລັງກອງຫຼອນ, ກຳລັງປ້ອງກັນຕົວ**

ກຳລັງກອງຫຼອນ, ກຳລັງປ້ອງກັນຕົວ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ ຫຼື ຖືກດຳເນີນຄະດີ ຕາມລະບຽບກົດໝາຍ.

# ພາກທີ VI
# ບົດບັນຍັດສຸດທ້າຍ

**ມາດຕາ 69 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 70 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍ ພັນທະປ້ອງກັນຊາດ ສະບັບເລກທີ 02/ສພຊ ລົງວັນທີ 08 ມີນາ 1995.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້